ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0086 / ກປ

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2010

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າກົມ, ກອງ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ.

ເລື່ອງ: ຫ້າມເກັບກູ້ ແລະ ເກັບຊື້ຊະນິດພືດ, ເບ້ຍໄມ້, ຕົ້ນໄມ້ ລວມທັງຕໍໄມ້ ແລະ ເຫງົ້າໄມ້ ທີ່ເປັນໄມ້ປະດັບ ແລະ ຕົ້ນໄມ້ນ້ອຍທີ່ເປັນຊະນິດໄມ້ປະເພດພິເສດ ແລະ ປະເພດ ຫວງຫ້າມອອກຈາກປ່າທຳມະຊາດ.

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06 / ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148 / ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 17 / ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

ເພື່ອປະຕິບັດຍຸດທະສາດ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ແບບຍືນຍົງ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍປ່າໄມ້ ແລະ ລະບຽບການອື່ນກ່ຽວກັບ ການຄຸ້ມຄອງປ່າໄມ້ ຕາມສາມປະເພດປ່າ ເຊັ່ນ: ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຖະບານ ໄດ້ວາງອອກໃຫ້ມີປະສິດທິຜົນ ແລະ ສຳເລັດເປັນຢ່າງດີ, ແນໃສ່ເຮັດໃຫ້ໂຄງສ້າງຂອງປ່າໄມ້ທຳມະຊາດແຕ່ ລະປະເພດຍັງຄົງມີໄວ້ແຫ່ງຄວາມອຸດົມສົມບູນໄປດ້ວຍພັນພືດ ແລະ ພັນໄມ້ນາໆຊະນິດ. ໃນໄລຍະຜ່ານມາ, ຂະແໜງການປ່າໄມ້ຢູ່ແຕ່ລະແຂວງ ກໍໄດ້ເອົາໃຈໃສ່ຊີ້ນຳຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ຂອງ

ວຽກງານການຄຸ້ມຄອງປ່າໄມ້ໃນຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ດີພໍສົມຄວນ. ຄຽງຄູ່ກັບດ້ານດີດັ່ງທີ່ກ່າວມານັ້ນ ກໍຍັງມີບາງປະກົດການໃໝ່ເກີດຂຶ້ນ ຊຶ່ງຖືວ່າເປັນໄພຂົ່ມຂູ່ ແລະ ມີຜົນກະທົບຮ້າຍແຮງໃນທາງລົບຕໍ່ປ່າໄມ້ທຳມະຊາດ ເປັນຕົ້ນແມ່ນຢູ່ຫຼາຍແຂວງ ຍັງອະນຸຍາດ ຫຼື ປ່ອຍປະໃຫ້ບຸກຄົນ, ນິຕິບຸກຄົນ ເກັບກູ້ ແລະ ເກັບຊື້ເອົາເບັ້ຍພັນພືດ, ເບັ້ຍໄມ້ນ້ອຍ, ຕົ້ນໄມ້, ຕໍໄມ້ ແລະ ເຫງົ້າໄມ້ ຊະນິດພັນຕ່າງໆທີ່ເປັນໄມ້ປະດັບ ແລະ ຕົ້ນໄມ້ນ້ອຍທີ່ເປັນຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມມາເປັນສິນຄ້າຂາຍຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດຢ່າງເປັນຂະບວນ ແລະ ຕໍ່ເນື່ອງ. ຖ້າຫາກສະພາບການດັ່ງກ່າວນີ້ ຍັງສືບຕໍ່ເກີດຂຶ້ນ ແລະ ບໍ່ມີມາດຕະການຄຸ້ມຄອງ ແລະ ຄວບຄຸມຢ່າງຖືກຕ້ອງຈະກໍ່ຄວາມເສັຍຫາຍອັນໃຫຍ່ຫຼວງໃຫ້ແກ່ທັງໝົດລະບົບນິເວດທຳມະຊາດເຮັດໃຫ້ລະບົບວິທະຍາປ່າໄມ້ ຂາດຄວາມສົມດຸນ ແລະ ຄຸນນະພາບຂອງປ່າໄມ້ນັບມື້ຈະເຊື່ອມໂຊມໄປເລື້ອຍໆ ຊຶ່ງຈະເປັນຜົນກະທົບໂດຍກົງຕໍ່ເສດຖະກິດແຫ່ງຊາດໃນໄລຍະຍາວ.

ເພື່ອແກ້ໄຂ ແລະ ສະກັດກັ້ນປາກົດການດັ່ງກ່າວ ພ້ອມທັງຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ປົກປັກຮັກສາປ່າໄມ້ທຳມະຊາດ, ອະນຸລັກຊີວະນາງພັນໃຫ້ມີຄວາມອຸດົມສົມບູນ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດໃຫ້ໄດ້ດີ

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ ດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຊີ້ນຳຂະແໜງປ່າໄມ້ ແລະຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ສຸມໃສ່ວຽກງານໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມກົດໝາຍ ແລະ ລະບຽບການຕ່າງໆກ່ຽວກັບວຽກງານຄຸ້ມຄອງ ແລະ ກວດກາປ່າໄມ້ ໃຫ້ແກ່ພະນັກງານ, ຜູ້ປະກອບການທຸລະກິດດ້ານກະສິກຳ ແລະ ປ່າໄມ້ ຕະຫຼອດຮອດປະຊາຊົນບັນດາເຜົ່າໃຫ້ມີຄວາມເຂົ້າໃຈ, ແລະ ເຫັນໄດ້ຄຸນຄ່າຄວາມໝາຍຄວາມສຳຄັນຂອງປ່າໄມ້ຕໍ່ກັບວຽກງານປົກປັກຮັກສາ ແລະ ພັດທະນາປະເທດຊາດໃນໄລຍະຍາວ;
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຊີ້ນຳຂະແໜງປ່າໄມ້ ໃຫ້ແຕ່ງຕັ້ງພະນັກງານວິຊາການຂອງຕົນ ລົງເກັບກຳຂໍ້ມູນເບັ້ຍພັນພືດ, ເບັ້ຍໄມ້ນ້ອຍ, ຕົ້ນໄມ້, ຕໍໄມ້, ເຫງົ້າໄມ້ຊະນິດພັນຕ່າງໆ ທີ່ເປັນໄມ້ປະດັບ ແລະ ຕົ້ນໄມ້ນ້ອຍທີ່ເປັນຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມທີ່ເອົາມາຈາກປ່າໄມ້ທຳມະຊາດ ເພື່ອຕົບແຕ່ງ, ເພາະຊຳ ແລະ ວາງຂາຍຢູ່ຕາມສວນ ແລະ ສະຖານທີ່ຂາຍເບັ້ຍໄມ້ຂອງບຸກຄົນ ແລະ ນິຕິບຸກຄົນ ແລ້ວຂຶ້ນບັນຊີ, ເຮັດບົດບັນທຶກບໍ່ໃຫ້ຜູ້ປະກອບການສືບຕໍ່ເກັບກູ້ ແລະ ເກັບຊື້ຊະນິດພືດ, ເບັ້ຍໄມ້, ຕົ້ນໄມ້, ຕໍໄມ້, ເຫງົ້າໄມ້ຕ່າງໆທີ່ເປັນໄມ້ປະດັບ ແລະ ຕົ້ນໄມ້ນ້ອຍທີ່ເປັນຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມທີ່ນຳມາຈາກປ່າໄມ້ທຳມະຊາດອີກຕໍ່ໄປ;
3. ມອບໃຫ້ກົມກວດກາປ່າໄມ້ ເປັນເຈົ້າການຊີ້ນຳຂະແໜງການຂອງຕົນຢູ່ຂັ້ນທ້ອງຖິ່ນສົມທົບກັບເຈົ້າໜ້າທີ່ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ ເພື່ອກວດກາການເຄື່ອນຍ້າຍເບັ້ຍພັນພືດ, ເບັ້ຍໄມ້ນ້ອຍ, ຕົ້ນໄມ້, ຕໍໄມ້ ແລະ ເຫງົ້າໄມ້ ຊະນິດພັນຕ່າງໆທີ່ເປັນໄມ້ປະດັບທີ່ເອົາມາຈາກປ່າໄມ້ທຳມະຊາດ ໂດຍສະ ໄຊ

ເພາະແມ່ນຕົ້ນໂພ, ໄຮຍອຍ, ຕີນເປັດ, ກະໂດນນ້ຳ, ກາກະເລົາ, ສົ້ມຝາດ, ລົມພໍ ລວມທັງຕົ້ນນ້ອຍຂອງຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດ;

4. ຫ້າມອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການທຸລະກິດດ້ານກະສິກຳ ແລະ ປ່າໄມ້ ເກັບກູ້, ເກັບຊື້ຊະນິດພືດ, ເບັ້ຍໄມ້, ຕົ້ນໄມ້, ຕໍໄມ້, ເຫງົ້າໄມ້ທີ່ເປັນໄມ້ປະດັບ ແລະ ຕົ້ນນ້ອຍຂອງຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມຕ່າງໆຈາກປ່າໄມ້ທຳມະຊາດ ເພື່ອເປັນສິນຄ້າຈຳໜ່າຍຢູ່ໃນສວນ, ສະຖານທີ່ຂາຍເບັ້ຍໄມ້ຕ່າງໆ, ເຄື່ອນຍ້າຍ ແລະ ສົ່ງອອກຕ່າງປະເທດໂດຍເດັດຂາດ;
5. ກໍລະນີຫາກມີໂຄງການໃດທີ່ໄດ້ຮັບອະນຸມັດຈາກລັດຖະບານເພື່ອນຳເອົາເບັ້ຍພັນພືດ, ເບັ້ຍໄມ້ນ້ອຍ, ຕົ້ນໄມ້, ຕໍໄມ້, ເຫງົ້າໄມ້ຊະນິດພັນຕ່າງໆທີ່ເປັນໄມ້ປະດັບ ແລະ ຕົ້ນໄມ້ນ້ອຍທີ່ເປັນຊະນິດໄມ້ປະເພດພິເສດ ແລະ ປະເພດຫວງຫ້າມຈາກປ່າໄມ້ທຳມະຊາດມາປູກເປັນໄມ້ປະດັບໃນຂອບເຂດເນື້ອທີ່ຂອງໂຄງການ ແມ່ນໃຫ້ປະກອບເອກະສານນຳສະເໜີຂໍອະນຸມັດຈາກຂະແໜງການປ່າໄມ້ຕາມລະບຽບການ;
6. ມອບໃຫ້ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ຊຸກຍູ້ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການທຸລະກິດດ້ານກະສິກຳ ແລະ ປ່າໄມ້ ຂະຫຍາຍພັນໄມ້ປະດັບຊະນິດຕ່າງໆຕາມຫຼັກວິຊາການປ່າໄມ້ ໂດຍບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດປ່າໄມ້ທຳມະຊາດ;
7. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຈັດຕັ້ງຜັນຂະຫຍາຍ, ຕິດຕາມ, ຊຸກຍູ້ ແລະສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດໃນຂອບເຂດທ້ອງຖິ່ນຂອງຕົນຕໍ່ການນຳກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບຊາບເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ສິຕາເຮັ້ງ ຣາຊະພົນ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ຫ້ອງວ່າການສູນກາງພັກ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ (ໃຊ້ຕາງລາຍງານ); |
| 3. | ຫ້ອງການຄະນະເລຂາທິການລັດຖະບານ | 01 ສະບັບ (ໃຊ້ຕາງລາຍງານ); |
| 4. | ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ | 01 ສະບັບ (ເພື່ອຊ່ວຍອອກຂ່າວ); |
| 5. | ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ (ເພື່ອຊາບ); |
| 6. | ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ທົ່ວປະເທດ | 01 ສະບັບ (ເພື່ອຊ່ວຍຊຸກຍູ້); |
| 7. | ເກັບມ້ຽນ | 01 ສະບັບ. |